ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ຫ້ອງການ

ເລກທີ 2865 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 22 ຕ.ລ. 2018

## ແຈ້ງການ

ເຖິງ: ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງຕ່າງໆ.

ເລື່ອງ: ເປີດນຳໃຊ້ລະບົບຂໍ້ມູນຂ່າວສານຄຸ້ມຄອງລາຍຮັບສ່ວຍສາອາກອນ (ລະບົບໃໝ່).

- ອີງຕາມຂໍ້ຕົກລົງສະບັບເລກທີ 2929/ກງ ລົງວັນທີ 31/08/2017 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການ ກະຊວງການເງິນ;

ຫ້ອງການ ກະຊວງການເງິນ ຂໍຖືເປັນກຽດແຈ້ງມາຍັງທ່ານ ກ່ຽວກັບການເປີດນຳໃຊ້ລະບົບຂໍ້ມູນຂ່າວສານຄຸ້ມຄອງເກັບລາຍຮັບສ່ວຍສາອາກອນ "TaxRIS" (ລະບົບໃໝ່) ຂອງກົມສ່ວຍສາອາກອນ, ລາຍລະອຽດດັ່ງລຸ່ມນີ້:

1. ເລີ່ມແຕ່ວັນທີ 15/10/2018 ເປັນຕົ້ນໄປ ແມ່ນ ຈະອອກເລກປະຈຳຕົວຜູ້ເສຍອາກອນພ້ອມກັບໃບທະບຽນວິສາຫະກິດ ໃນເວລາທີ່ວິສາຫະກິດຂໍສ້າງຕັ້ງວິສາຫະກິດໃໝ່ຈາກພາກສ່ວນ ທະບຽນ ແລະ ຄຸ້ມຄອງວິສາຫະກິດ ຂອງ ກະຊວງ ອຸດສາຫະກຳ ແລະ ການຄ້າ ໃນຂອບເຂດທົ່ວປະເທດ, ບ່ອນທີ່ ພາກສ່ວນ ທະບຽນ ແລະຄຸ້ມຄອງວິສາຫະກິດນຳໃຊ້ລະບົບຄຸ້ມຄອງທະບຽນວິສາຫະກິດ ແລະ ມີການເຊື່ອມຕໍ່ສົ່ງຂໍ້ມູນກັບລະບົບ "TaxRIS";
2. ພາຍຫຼັງວິສາຫະກິດໄດ້ຮັບໃບທະບຽນວິສາຫະກິດທີ່ມີເລກປະຈຳຕົວຜູ້ເສຍອາກອນແລ້ວ ແມ່ນ ສາມາດດຳເນີນທຸລະກິດໄດ້ຖືກຕ້ອງຕາມລະບຽບກົດໝາຍ ແລະ ພາຍໃນ 90 ວັນ ນັບແຕ່ມື້ອອກໃບທະບຽນວິສາຫະກິດ ແມ່ນ ໃຫ້ວິສາຫະກິດດັ່ງກ່າວເຂົ້າມາພົວພັນນຳລັດຖະການສ່ວນສ່ວຍສາອາກອນ ເພື່ອປະກອບຂໍ້ມູນການແຈ້ງມອບອາກອນໃຫ້ຖືກຕ້ອງຄົບຖ້ວນຕາມລະບຽບ ແລະ ກົດໝາຍທີ່ກ່ຽວຂ້ອງ. ຖ້າວິສາຫະກິດໃດບໍ່ພົວພັນຫາລັດຖະການສ່ວຍສາອາກອນຕາມກຳນົດດັ່ງກ່າວ, ຖືວ່າວິສາຫະກິດດັ່ງກ່າວບໍ່ເຄື່ອນໄຫວ ແລະ ຈະຖືກປະຕິບັດຕາມ ມາດຕາ 22 ຂອງກົດໝາຍວ່າດ້ວຍວິສາຫະກິດ;
3. ສຳລັບວິສາຫະກິດທີ່ມີໃບທະບຽນວິສາຫະກິດອອກກ່ອນວັນທີ 15/10/2018, ວິສາຫະກິດທີ່ອອກໃບທະບຽນວິສາຫະກິດຢູ່ກັບພາກສ່ວນທະບຽນ ແລະຄຸ້ມຄອງວິສາຫະກິດ ທີ່ບໍ່ມີການເຊື່ອມຕໍ່ກັບລະບົບ TaxRIS ບໍ່ສາມາດອອກເລກປະຈຳຕົວຜູ້ເສຍອາກອນພ້ອມກັບໃບທະບຽນວິສາຫະກິດ, ວິສາຫະກິດທີ່ຂໍອະນຸຍາດດຳເນີນທຸລະກິດຜ່ານຂະແໜງການອື່ນໆ ນອກຈາກຂະແໜງການຄ້າ ແລະ ຜູ້ເສຍອາກອນທີ່ບໍ່ ແມ່ນ ວິສາຫະກິດ ເປັນຕົ້ນ: ບຸກຄົນທົ່ວໄປ, ອົງການຈັດຕັ້ງຕ່າງໆ ແມ່ນ ໃຫ້ຂໍເລກປະຈຳຕົວຜູ້ເສຍອາກອນຢູ່ຫ້ອງການສ່ວຍສາອາກອນບ່ອນທີ່ຕົນຂຶ້ນກັບ ຫຼື ສາມາດຂໍເລກປະຈຳຕົວຜູ້ເສຍອາກອນດ້ວຍຕົນເອງ ຜ່ານເວັບໄຊທ໌ (taxservice.mof.gov.la);
4. ວັນທີ 15/10/2018, ກົມສ່ວຍສາອາກອນຍ້າຍຈຸດບໍລິການຜູ້ເສຍອາກອນໄປຢູ່ສູນບໍລິການຊົ່ວຄາວ ທີ່ຕັ້ງຢູ່ບ້ານໂພນໄຊ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ ດ້ານຫຼັງກະຊວງການເງິນ ຫຼື ດ້ານຫຼັງບໍລິສັດສະຕາຣໂທລະຄົມ;
5. ວັນທີ 5/11/2018, ເລີ່ມແຈ້ງມອບອາກອນໃນລະບົບໃໝ່ຕາມຮູບແບບການແຈ້ງອາກອນແບບໃໝ່ ແລະ ຜູ້ເສຍອາກອນສາມາດແຈ້ງມອບອາກອນດ້ວຍຕົນຜ່ານເວັບໄຊທ໌(taxservice.mof.gov.la).

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ແລະ ປະຕິບັດຕາມດ້ວຍ,

ຫົວໜ້າຫ້ອງການ

ສົມບູນ ອິນທະປັດຖາ

ເບີຕິດຕໍ່: 021 217025

Scanned by CamScanner